สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະຈັດຕັ້ງສູນກາງພັກ
ຫ້ອງການ

ເລກທີ 1013 /ຫກ
ນະຄອນຫລວງວຽງຈັນ, ວັນທີ 05 ພະຈິກ 2026

ໜັງສືແຈ້ງການປະມູນ

1. ຫ້ອງການ ຄະນະຈັດຕັ້ງສູນກາງພັກຂໍເຊີນ ບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຮ່ວມປະມູນ ການສ້າງລະບົບຄຸ້ມຄອງຂໍ້ມູນພະນັກງານ-ລັດຖະກອນ ແລະ ພາລະກອນ ແບບທັນສະໄໝ ກຳນົດໄລຍະເວລາ 7 ເດືອນໃຫ້ສຳເລັດ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳເນາະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ແມ່ນເປີດກວ້າງພາຍໃນໃຫ້ທຸກໆ ບໍລິສັດ ຫຼື ວິສາຫະກິດ ທີ່ດຳເນີນທຸລະກິດຢູ່ໃນ ສປປ ລາວ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ມີເລກປະຈຳຕົວຜູ້ເສຍອາກອນ ແລະ ມີໃບຢັ້ງຢືນການມອບອາກອນປະຈຳປີ 2025 ຫຼື 2026, ໃບອະນຸຍາດດຳເນີນທຸລະກິດດ້ານເຕັກໂນໂລຊີດີຈີຕ່ອນ, ປະຫວັດຫຍໍ້ຂອງບໍລິສັດ ແລະ ລາຍຊື່ຜົນງານທີ່ຜ່ານມາ, ໂຄງສ້າງທີມງານ, ປະຫວັດຫຍໍ້ (CV) ພ້ອມດ້ວຍສຳເນົາໃບປະກາດສະນິຍະບັດ ຂອງບຸກຄະລາກອນຫຼັກ ແລະ ຜົນງານປະສົບການທາງດ້ານການພັດທະນາລະບົບຖານຂໍ້ມູນ ໂດຍມີເອກະສານອ້າງອີງ ເປັນຕົ້ນ ສັນຍາ, ໜັງສືຢັ້ງຢືນຜົນງານຈາກພາກສ່ວນກ່ຽວຂ້ອງ, ບົດສະເໜີດ້ານເຕັກນິກ, ແຜນງານການພັດທະນາ (Project Timeline) ແລະ ສະຖາປັດຕະຍະກຳລະບົບ, ໃບມອບສິດເຂົ້າຮ່ວມກອງປະຊຸມເປີດຊອງປະມູນ ໃນກໍລະນີທ່ານຜູ້ອຳນວຍການບໍ່ໄດ້ເຂົ້າຮ່ວມເອງ ທີ່ຖືກຕ້ອງຕາມກົດໝາຍກຳນົດ;
4. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ ບໍລິສັດ ຫຼື ວິສາຫະກິດ ທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມການແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ພະແນກຄຸ້ມຄອງ ແລະ ບໍລິຫານ ຫ້ອງການຄະນະຈັດຕັ້ງສູນກາງພັກ (ຮົ້ວຫຼັກ 6) ຜູ້ປະສານງານ ທ່ານ ບົວພາ ດວງປັນຍາ ເບີໂທ: 020 2294 3483 ແລະ ທ່ານ ໂລກີ ລາດສະບັນດິດ ເບີໂທ: 020 29991994 ໃນເວລາລັດຖະການ;
5. ເອກະສານປະມູນເລີ່ມຂາຍແຕ່ວັນທີ 05 ພະຈິກ 2026 ຫາ 23 ພະຈິກ 2026. ໃນລາຄາ 4,000,000 ກີບ/ຊອງ ວິທີການຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານປະມູນ;
6. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 23 ພະຈິກ 2026, ຊອງປະມູນທຸກໆຊອງຈະໄດ້ເປີດຊອງໃນວັນທີ 23 ພະຈິກ 2026 ເວລາ 09:30 ໂມງ ທີ່ຫ້ອງປະຊຸມຊັ້ນ III ຂອງ ຄະນະຈັດຕັ້ງສູນກາງພັກ (ຮົ້ວ ຫສນຍ) ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ຫຼື ວິສາຫະກິດ ທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຄະນະຮັບຜິດຊອບຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ;
7. ທຸກຊອງປະມູນຕ້ອງມີການຄ້ຳປະກັນດ້ວຍ ແຊັກ (ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ຄະນະຈັດຕັ້ງສູນກາງພັກ ຫ້ອງການ

ຈັນນະ ບຸບຜາ